ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງວຽງຈັນ
ຄະນະໂຄສະນາອົບຮົມແຂວງ ເລກທີ 328/ ຄອຮວຈ.
ວຽງຈັນ,ວັນທີ ...9..ພ.ຈິກ.2023...

**ຄຳແນະນຳ**
**ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ**
**ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງ ເພື່ອກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ.**

**ເຖິງ: ຄະນະພັກເມືອງ, ພະແນກການ, ກົມກອງ, ອົງການ, ບໍລິສັດລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ, ຄະນະພັກກຸ່ມບ້ານ ທົ່ວແຂວງ.**
**ເລື່ອງ: ການນຳໃຊ້ເອກະສານ ແລະ ຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ.**

- ອີງຕາມ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກສະບັບເລກທີ 411 / ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.
- ອີງຕາມ ຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 34/ຄອສພ, ລົງວັນທີ 15 ກັນຍາ 2023 ກ່ຽວກັບການນຳໃຊ້ ເອກະສານສຶກສາອົບຮົມ ການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັງແຫຼ່ງ ເພື່ອດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ.
- ອີງຕາມ ຄຳສັ່ງ ຂອງຄະນະປະຈຳພັກແຂວງວຽງຈັນ ສະບັບເລກທີ 019/ຄປພ.ວຈ ລົງວັນທີ 22 ກັນຍາ 2023 ວ່າດ້ວຍ ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ອົງຄະນະພັກແຂວງ, ອົງຄະນະພັກເມືອງ, ຄະນະພັກ 2 ກອງບັນຊາການ ແລະ ຮາກຖານພັກ ໃນທົ່ວແຂວງວຽງຈັນ.
- ອີງຕາມ ມະຕິຕົກລົງ ຂອງຄະນະປະຈຳພັກແຂວງວຽງຈັນ ສະບັບເລກທີ 059/ຄປພວຈ, ລົງວັນທີ 1 ມີນາ 20223 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມແຂວງວຽງຈັນ ແນະນຳບາງບັນຫາ ດັ່ງນີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອໂຄສະນາເຜີຍແຜ່ໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ, ທະຫານ, ຕຳຫຼວດ ໃນທົ່ວສັງຄົມໃຫ້ຮັບຮູ້-ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນຂອງກອງປະຊຸມ 3 ຂັ້ນ ແນ່ໃສ່ເພື່ອສ້າງຄວາມຕື່ນ

ຕົວ, ເປັນເຈົ້າການເຂົ້າຮ່ວມໃນການກະກຽມ ແລະ ດຳເນີນກອງປະຊຸມ 3 ຂັ້ນ, ໃຫ້ດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ ແລະ ມີຜົນສຳເລັດຢ່າງຈົບງາມ.

2. ເພື່ອສຶກສາອົບຮົມການເມືອງ-ແນວຄິດໃຫ້ເປົ້າໝາຍ ທີ່ຈະກຽມເຂົ້າຄັດເລືອກເປັນ ຄະນະພັກແຕ່ລະຂັ້ນຢູ່ບັນດາເມືອງ, ພະແນກການ, ກົມກອງ, ອົງການ, ບໍລິສັດລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ ຄະນະພັກ ກຸ່ມບ້ານ ທົ່ວແຂວງ, ທີ່ຈະດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ໄດ້ມີຄວາມຮັບຮູ້-ເຂົ້າໃຈ ຕໍ່ກັບຄວາມໝາຍ, ຄວາມສຳຄັນຂອງກອງປະຊຸມ 3 ຂັ້ນ, ກຳແໜ້ນເຖິງ ການຍົກສູງບົດບາດການນຳພາຂອງພັກ ເຂົ້າໃນວຽກງານຕ່າງໆ ພ້ອມດຽວກັນນັ້ນ ຍັງເປັນການຝຶກຝົນຫຼໍ່ຫຼອມຕົນເອງ ດ້ານຄຸນທາດການເມືອງ ຄຸນສົມບັດ ສິນທຳປະຕິວັດ ຂອງພະນັກງານ, ສະມາຊິກພັກ.

2. ບົນພື້ນຖານການຮຽນຮູ້, ເຂົ້າໃຈດັ່ງກ່າວ ພະນັກງານ, ສະມາຊິກພັກ ທີ່ຖືກຄັດເລືອກເຂົ້າໃນຄະນະນຳ ຕາມທີ່ກອງປະຊຸມໃຫຍ່ແຕ່ລະຂັ້ນເລືອກເອົານັ້ນ ເປັນເຈົ້າການອຸທິດສະຕິປັນຍາ ແລະ ເຫື່ອແຮງເຂົ້າໃສ່ພາລະກິດປະຕິວັດ, ເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນ ແລະ ສັດທາ ເພື່ອເຮັດໃຫ້ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

## II. ເນື້ອໃນ.

**ນຳໃຊ້ເນື້ອໃນເອກະສານປະກອບມີ 4 ບົດ ຕາມຄຳແນະນຳ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 34/ຄອສພ, ລົງວັນທີ 15 ກັນຍາ 2023 ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ສຳລັບສະມາຊິກພັກ, ພະນັກງານຫຼັກແຫຼ່ງ ເພື່ອດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ດັ່ງນີ້;**

**ບົດທີ 01:** ຄວາມເຂົ້າໃຈກ່ຽວກັບກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ.

**ບົດທີ 02:** ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ.

**ບົດທີ 03:** ຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

**ບົດທີ 04:** ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ ໃນຖັນແຖວພະນັກງານ, ສະມາຊິກພັກ.

## III. ເປົ້າໝາຍສຶກສາອົບຮົມ.

ແມ່ນສະມາຊິກພັກ-ພະນັກງານຫຼັກແຫຼ່ງທີ່ເຮັດວຽກຢູ່ບັນດາເມືອງ, ພະແນກການ, ກົມກອງ, ອົງການ, ລັດວິສາຫະກິດ, ໂຮງຮຽນ, ໂຮງໝໍ ອ້ອມຂ້າງແຂວງ, ບັນດາກຸ່ມບ້ານໃນຂອບເຂດທົ່ວແຂວງ.

## IV. ວິທີຈັດຕັ້ງປະຕິບັດ.

1. ໃຫ້ຄະນະພັກຮາກຖານ, ໜ່ວຍພັກເອກະລາດ ອ້ອມຂ້າງແຂວງ, ເມືອງນຳເອົາເອກະສານດັ່ງກ່າວ ຈັດຕັ້ງສຶກສາອົບຮົມສະມາຊິກພັກ, ພະນັກງານຫຼັກແຫຼ່ງ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບຕົວຈິງຂອງແຕ່ລະບ່ອນ. ໝາຍຄວາມວ່າ ບ່ອນໃດມີສະມາຊິກພັກ, ພະນັກງານຫຼັກແຫຼ່ງຫຼາຍ ອາດຈັດຕັ້ງສຶກສາອົບຮົມເປັນຫຼາຍຊຸດຕາມຄວາມເໝາະສົມຂອງແຕ່ລະບ່ອນ.

2. ກຳນົດເວລາຮຽນເອກະສານ 2 ວັນ ໂດຍມີການແບ່ງຈຸ ຄົ້ນຄ້ວາຮ່ຳຮຽນ ຢ່າງເລິກເຊິ່ງ,

3. ສຳລັບຜູ້ທີ່ບັນຍາຍເອກະສານນີ້ ຕ້ອງແມ່ນສະຫາຍ ເລຂາ ຄະນະພັກຮາກຖານ, ເລຂາໜ່ວຍພັກ, ເປັນຜູ້ຮັບຜິດຊອບບັນຍາຍໂດຍກົງ.

4. ມອບໃຫ້ ຄະນະໂຄສະນາເມືອງ ເປັນເສນາທິການໃຫ້ແກ່ຄະນະພັກຂອງຕົນ ເພື່ອຈັດຕັ້ງປະຕິບັດການສຶກສາອົບຮົມເອກະສານນີ້ຕາມພາລະບົດບາດຂອງຕົນ.

5. ພາຍຫຼັງ ຈັດຕັ້ງຮ່ຳຮຽນ ສຶກສາອົບຮົມສຳເລັດແລ້ວ ໃຫ້ລາຍງານໄປຍັງຄະນະໂຄສະນາອົບຮົມແຂວງ ຮັບຊາບ ເພື່ອຈະສະຫຼຸບລາຍງານສັງລວມໃຫ້ຄະນະປະຈຳພັກແຂວງ, ຄະນະໂຄສະນາອົບຮົມສູນກາງພັກ ຢ່າງເປັນທາງການ.

ດັ່ງນັ້ນ, ຈຶ່ງແນະນຳ ມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະ**

ສີທົນ ແສງພະຈັນ